**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ 1580 /ຍທຂ

ບໍລິຄຳໄຊ, ວັນທີ 6 / ເມສາ 2026

**ຊື່ໂຄງການ: ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດປີ 2026.**

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ,** ໄດ້ຮັບການຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການ : ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກ 1E ກມ 0+000 - ກມ 38+000 (ແຕ່ ສີ່ແຍກໄຟແດງຫຼັກຊາວ ຫາ ຊາຍແດນແຂວງຄຳມ່ວນ) ລວງຍາວ 38 ກມ;

1. ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ ສຳລັບບ້ວງເງິນທີ່ຈະຊຳລະສະສາງ ແມ່ນນຳໃຊ້ງົບປະມານກອງທຶນທາງໄດ້ຮັບອະນຸມັດ ປະຈຳປີ 2026;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງສ້ອມແປງແມ່ນ 12 ເດືອນ;
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄຳໄຊ ຫຼື ທົ່ວປະເທດ;
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂະແໜງຂົວທາງ ຢູ່ບ້ານທົ່ງໄຊ ເມືອງປາກຊັນ ແຂວງບໍລິຄຳໄຊ ໂທລະສັບ/ແຟັກ: 054-212091 ແລະ ຂະແໜງການຈັດຊື້-ຈັດຈ້າງພະແນກການເງິນແຂວງ ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ 8:00-12:00ໂມງ ແລະ 13:00-16:00ໂມງ ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ເລີ່ມແຕ່ວັນທີ 6 ເມສາ 2026 ເປັນຕົ້ນໄປ ໃນລາຄາ 1.000.000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 13:30 ໂມງ ຂອງວັນທີ 20 ພຶດສະພາ 2026 ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ 12 ພຶດສະພາ 2026, ເວລາ 8:30 ໂມງເຊົ້າ, ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ ພະແນກ

2

ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ທາງ 21 ບ້ານທົ່ງໄຊ, ເມືອງປາກຊັນ ແຂວງບໍລິຄຳໄຊ ໃນເວລາ 13:30 ໂມງ ຂອງວັນ 20 ພຶດສະພາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ;

8. ເອກະສານປະມູນ ຕ້ອງໄດ້ປະກອບຫນັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ 2 % ຂອງມູນຄ່າປະມູນໂດຍຫນັງສືຄ້ຳປະກັນການປະມູນ ຕ້ອງແມ່ນຫນັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

**ເຊັນແທນຫົວໜ້າພະແນກ**

**ຮອງຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ

ປອ ສົມນຶກ ແກ້ວມະນີ

ຕິດຕໍ່:

1. ທ່ານ ກ້ອນນອນຄຳ ຈັນທະມີນາວົງ ໂທ: 020 22117888
2. ທ່ານ ຄຳປະເສີດ ພັນທະວົງ ຈະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທ: 020 28870055